ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 194 /ນຍ

ນະຄອນຫຼວງວຽງຈັນ, ວັນທີ. 17-12-2004

# ດຳລັດ
# ວ່າດ້ວຍ ນາມມະຍົດສິລະປິນລາວ

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6/05/2003.
- ອີງຕາມ ການສະເໜີຂອງລັດຖະມົນຕີວ່າການ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ສະບັບເລກທີ 417/ຖ.ວ, ລົງວັນທີ 2/7/2004.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1: ຈຸດປະສົງ

ດຳລັດສະບັບນີ້ກຳນົດລະບຽບການ, ມາດຕະຖານ, ເງື່ອນໄຂ ແລະ ມາດຕະການຕ່າງໆ ໃນການມອບນາມມະຍົດໃຫ້ແກ່ສິລະປິນລາວ ເພື່ອເປັນການປົກປັກຮັກສາ ແລະ ສົ່ງເສີມມໍລະດົກດ້ານວັດທະນະທຳຂອງຊາດ, ແນໃສ່ເພື່ອຈາລຶກຄຸນງາມຄວາມດີ ແລະ ຜົນງານອັນດີເດັ່ນ ຂອງ ສິລະປິນລາວທຸກຂະແໜງ ທີ່ໄດ້ອຸທິດເຫື່ອແຮງ ສະຕິປັນຍາຂອງຕົນ ເຂົ້າໃນການອະນຸລັກ ປົກປັກຮັກສາ, ການປະດິດສ້າງ ແລະ ເປັນບ່ອນອີງ ໃນການປະຕິບັດນະໂຍບາຍອັນຊອບທຳທາງດ້ານວັດຖຸ ແລະ ຈິດໃຈ ແລະ ດ້ານສະຫວັດດີການສັງຄົມຕ່າງໆ; ເພື່ອເຊີດຊູຖານະ ບົດບາດ ຂອງ ສິລະປິນລາວ ໃຫ້ສູງເດັ່ນໃນສັງຄົມລາວ ແລະ ໃນໂລກ.

### ມາດຕາ 2: ນິຍາມນັກສິລະປິນ

ນັກສິລະປິນລາວ ແມ່ນຜູ້ທີ່ເຄື່ອນໄຫວ ດ້ານສິລະປະວັດທະນະທຳ ໃນຂະແໜງຕ່າງໆ ທີ່ມີຜົນງານ, ມີປະສົບການຫຼາຍປີ ແລະ ເປັນທີ່ຍອມຮັບຈາກມະຫາຊົນຢ່າງກ້ວາງຂວາງ.

**ມາດຕາ 3 : ປະເພດສິລະປະ**

**ສິລະປະລາວ ລວມມີ 6 ປະເພດ ດັ່ງນີ້ :**

1.- **ວັນນະກຳ** : ໝາຍເຖິງການປະດິດຄິດແຕ່ງ, ການໃຊ້ພາສາເວົ້າ ແລະ ພາສາຂຽນເປັນຜະລິດຕະພັນສິລະປະກຳ ລວມມີ :

- ແບບຮ້ອຍແກ້ວ : ໄດ້ແກ່ ນິຍາຍ, ນະວະນິຍາຍ, ຕຳນານ, ພົງສາວະດານປະຫວັດສາດ, ເລື່ອງເລົ່າສືບຕໍ່ກັນມາແບບປາກເປົ່າ, ບົດຄວາມ, ບົດສາລະຄະດີ, ບົດລະຄອນ, ບົດຮູບເງົາ, ເລື່ອງສັ້ນ, ເລື່ອງຍາວ, ບົດປາຖະຄະຖາ ແລະ ອັກສອນຈາລຶກຕ່າງໆ.
- ແບບຮ້ອຍກອງ : ໄດ້ແກ່ການໃຊ້ພາສາທີ່ເປັນກາບກອນ, ກະວີ, ບົດປະພັນເພງ, ຜະຫຍາຍ່ອຍ, ກອນລຳ, ກອນເຊີ້ງ, ໂຄງສານ, ຈ້ອຍຊໍ, ໄອ້ອ່ານ ແລະ ອື່ນໆ.

2.- **ສິລະປະການສະແດງ** : ໝາຍເຖິງສິລະປະການບັນເທີງແບບພື້ນເມືອງ ແລະ ທັນສະໄໝຫຼາຍປະເພດ, ເຊັ່ນ : ດົນຕີມີເຄື່ອງດີດ, ສີ,ຕີ,ເປົ່າ, ຮ້ອງເພງ, ຂັບລຳທ້ອງຖິ່ນ, ຊົນເຜົ່າ, ຟ້ອນສາກົນ, ຟ້ອນພື້ນເມືອງ, ລຳເລື່ອງ, ລະຄອນເວທີ, ລະຄອນຕຸກກະຕາ, ລະຄອນໂທລະພາບ, ການສະແດງຮູບເງົາ, ກາຍະສິນ, ຕະຫຼົກຊວນຫົວ, ຕະຫຼອດເຖິງ ສິລະປະຊາວບ້ານຕ່າງໆ.

3.- **ຈິດຕະກຳສິນ** : ໝາຍເຖິງສີໄມ້ລາຍມື ແລະ ລວດລາຍທີ່ນັກຈິດຕະກອນໄດ້ວາດແຕ້ມລົງໃສ່ ວັດຖຸພັນຕ່າງໆ ເຊັ່ນ: ເຈ້ຍ, ແພໄໝ, ຝາພະນັງ ແລະ ອື່ນໆ ດ້ວຍສໍດຳ, ສີນ້ຳ, ສີນ້ຳມັນ, ສີນ້ຳກັງງ ແລະ ອື່ນໆ ເພື່ອສ້າງຮູບພາບແບບ ( ຮູບເໝືອນ) ຄ້າຍຄືຄວາມຈິງ ຫຼື (ຮູບບໍ່ເໝືອນ) ຕາມແບບຈິນຕະນາການ ແລະ ຄວາມໄຝ່ຝັນຂອງ ນັກຈິດຕະກອນເອງ ( ລວມທັງການແຕ້ມແບບໂບຮານ ແລະ ແຕ້ມແບບສະໄໝ).

4.- **ປະຕິມະກຳສິນ** : ໝາຍເຖິງວຽກງານການປັ້ນຫຼໍ່, ຄວັດ, ແກະສະຫຼັກຕ່າງໆ ທັງແບບນູນ ແລະ ແບບຫລຸບ ດ້ວຍວັດຖຸຕ່າງໆ ເຊັ່ນ : ດິນ, ຫີນ, ໄມ້, ຊີເມນ, ໂລຫະຊະນິດຕ່າງໆ ລວມທັງວັດຖຸມີຄ່າອື່ນໆ.

5.- **ສະຖາປະຕິມະກຳສິນ**: ໝາຍເຖິງການອອກແບບໃນການກໍ່ສ້າງ ແລະ ງານສິລະປະຕ່າງໆ ເຊັ່ນ: ການອອກແບບກໍ່ສ້າງວັດວາອາຮາມ, ເຄຫາສະຖານ, ທາດ, ອານຸສາວະລີ ( ສິລະປະໃນການອອກແບບ ແລະ ການນຳໃຊ້ວັດສະດຸ).

6.- **ສິລະປະຫັດຖະກຳ**: ໝາຍເຖິງງານສີນອັນສວຍສົດງົດງາມ ທີ່ຜະລິດອອກມາດ້ວຍສີມືອັນປານີດ, ເຄື່ອງປະດັບເອ້, ການຕຳປັກຖັກແສ່ວ, ຈັກສານ ແລະ ເຄື່ອງດົນຕີຕ່າງໆ.

**ມາດຕາ 4: ສາຂາສິລະປິນ:**

**ສິລະປິນລາວ ລວມມີ 6 ສາຂາ ດັ່ງນີ້ :**

1.- ວັນນະກຳ: ໄດ້ແກ່ ນັກປະພັນ, ນັກກະວີ.

2.- ສິລະປະການສະແດງ : ໄດ້ແກ່ ນັກປະດິດແຕ່ງ, ນັກຄົ້ນຄ້ວາ, ຜູ້ສິດສອນ, ນັກກຳກັບການສະແດງ, ນັກຮ້ອງ, ນັກຟ້ອນ, ນັກດົນຕີ, ໝໍລຳ, ນັກສະແດງລະຄອນ, ຮູບເງົາ, ໂຄສະນາ ແລະ ອື່ນໆ.

3.- ຈິດຕະກຳສິນ: ໄດ້ແກ່ ນັກແຕ້ມປະເພດຕ່າງໆ ເອີ້ນວ່າ: ຈິດຕະກອນ.

4.- ປະຕິມະກຳສິນ: ໄດ້ແກ່ ຊ່າງຄວັດ, ຊ່າງປັ້ນ, ຊ່າງຫຼໍ່, ຊ່າງແກະສະຫຼັກ, ຊ່າງຕີເງິນ, ຕີຄຳ ແລະ ອື່ນໆ.

5.- ສະຖາປະຕິມະກຳ : ໄດ້ແກ່ນັກອອກແບບປະເພດຕ່າງໆ.

6.- ສິລະປະຫັດຖະກຳ: ໄດ້ແກ່ຊ່າງຕຳຫູກ, ຊ່າງຖັກແສ່ວ, ຊ່າງເຮັດເຄື່ອງດິນຕີ, ຊ່າງໄມ້, ຊ່າງຈັກສານ ແລະ ອື່ນໆ.

## ໝວດທີ II
## ການແບ່ງຂັ້ນນາມມະຍົດສິລະປິນ

**ມາດຕາ 5: ນາມມະຍົດສິລະປິນລາວ.**

**ນາມມະຍົດສິລະປິນລາວ ແບ່ງອອກເປັນສອງຂັ້ນດັ່ງນີ້:**

1.- **ສິລະປິນແຫ່ງຊາດ**: ແມ່ນນາມມະຍົດຂັ້ນສູງສຸດຂອງສິລະປິນ ແຫ່ງ ສປປ ລາວ, ຊຶ່ງແມ່ນນາຍົກລັດຖະມົນຕີ ເປັນຜູ້ຕົກລົງຕາມການສະເໜີຂອງ ລັດຖະມົນຕີວ່າການກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ.

2.- **ສິລະປິນດີເດັ່ນ**: ແມ່ນນາມມະຍົດຂັ້ນທີສອງ ຂອງສິລະປິນແຫ່ງຊາດ ສປປ ລາວ, ຊຶ່ງແມ່ນລັດຖະມົນຕີວ່າການ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ເປັນຜູ້ຕົກລົງຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ. ຜູ້ໄດ້ຮັບນາມມະຍົດດັ່ງກ່າວ ຕະຫຼອດ 10 ປີ ລຽນຕິດ ຈະໄດ້ຮັບການພິຈາລະນາເລື່ອນຂັ້ນ ເປັນສິລະປິນແຫ່ງຊາດ.

ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ເປັນຜູ້ອອກລະບຽບການ ກ່ຽວກັບ ການຄັດເລືອກ ຜູ້ທີ່ໄດ້ຮັບນາມມະຍົດສິລະປິນແຫ່ງຊາດ ແລະ ສິລະປິນດີເດັ່ນ ຕາມທີ່ໄດ້ກຳນົດໄວ້ ຢູ່ໃນດຳລັດສະບັບນີ້.

## ໝວດທີ III
## ເປົ້າໝາຍຜູ້ທີ່ຈະໄດ້ຮັບນາມມະຍົດ

**ມາດຕາ 6: ສິລະປິນລາວ ທີ່ຈະໄດ້ຮັບນາມມະຍົດ.**

**ສິລະປິນລາວ ຜູ້ທີ່ຈະໄດ້ຮັບນາມມະຍົດ ມີດັ່ງນີ້:**

1.- ສິລະປິນລາວທຸກຄົນຢູ່ໃນທຸກຍຸກ ທຸກສະໄໝ ທີ່ມີຜົນງານອັນດີເດັ່ນ, ຊຶ່ງໄດ້ສ້າງສັນງານສິລະປະອັນເປັນທີ່ຮັບຮູ້ຂອງສັງຄົມພາຍໃນ ແລະ ຕ່າງປະເທດ, ທີ່ໄດ້ອຸທິດສະຕິປັນຍາ ແລະ ເຫື່ອແຮງເຂົ້າໃນການອະນຸລັກຮັກສາ, ເຜີຍແຜ່ເສີມຂະຫຍາຍ ແລະ ປະດິດຄິດສ້າງຢ່າງບໍ່ຢຸດຢັ້ງເຂົ້າໃນວຽກງານສິລະປະວັດທະນະທຳຂະແໜງຕ່າງໆ ທີ່ໄດ້ລະບຸໄວ້ໃນມາດຕາ 3 ແລະ 4 ຂອງດຳລັດສະບັບນີ້ ລ້ວນແຕ່ຈະໄດ້ຮັບພິຈາລະນາ ແລະ ຄັດເລືອກຮັບນາມມະຍົດຂັ້ນຕ່າງໆ ຕາມເງື່ອນໄຂ ແລະ ມາດຕະຖານຕົວຈິງ.

2.- ການຄັດເລືອກ ກ່ອນອື່ນໝົດຕ້ອງເລັ່ງໃສ່ເປົ້າໝາຍບຸລະສິດ ເຊັ່ນ: ສິລະປະຜູ້ອາວຸໂສທີ່ມີຜົນງານໂດດເດັ່ນທີ່ສຸດ, ຜູ້ທີ່ໄດ້ເສັຽຊີວິດ ແລະ ອອກບຳນານ, ຜູ້ເປັນສິລະປິນອາຊີບ ແລະ ເຄິ່ງອາຊີບຢູ່ຂັ້ນສູນກາງ, ຂະແໜງການ ແລະ ທ້ອງຖິ່ນຕ່າງໆ

## ໝວດທີ IV

## ມາດຕະຖານ, ເງື່ອນໄຂຂອງສິລະປິນລາວທີ່ຈະໄດ້ຮັບນາມມະຍົດ

### ມາດຕາ 7: ສິລະປິນແຫ່ງຊາດ.

ຜູ້ທີ່ຈະໄດ້ຮັບນາມມະຍົດ ເປັນສິລະປິນແຫ່ງຊາດ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1.- ເປັນຜູ້ທີ່ຈົງຮັກພັກດີຕໍ່ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ, ມີຄຸນສົມບັດ ແລະ ທັດສະນະຫລັກໝັ້ນ, ມີຄວາມອົດທົນໝຽວແໜ້ນສຳເລັດໜ້າທີ່ວິຊາສະເພາະຂອງຕົນ, ມີຄວາມຕື່ນຕົວປະຕິບັດແນວທາງຂອງພັກ ກົດໝາຍຂອງລັດ.

2.- ເປັນຜູ້ທີ່ມີພອນສະຫວັນ, ມີຄວາມສາມາດອັນໂດດເດັ່ນທີ່ສຸດ ໃນການອະນຸລັກຮັກສາເສີມຂະຫຍາຍ ແລະ ປະດິດຄິດສ້າງສິລະປະວັດທະນະທຳ ທີ່ເປັນເອກະລັກຂອງຊາດ, ມີບົດປະພັນ, ມີຜະລິດຕະພັນ, ບົດຄົ້ນຄ້ວາ, ບົດວິຈານ ແລະ ການສະແດງອັນເປັນທີ່ຍອມຮັບຂອງສັງຄົມລາວ ແລະ ຈາກຕ່າງປະເທດ.

3.- ເປັນຜູ້ທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນຂະບວນການສິລະປະວັດທະນະທຳ ໃນແຕ່ລະໄລຍະສ້າງ ແລະ ນຳພາລຸ້ນຄົນສືບທອດ, ຖ່າຍທອດບົດຮຽນ, ປະສົບການ ແລະ ຊ່ວຍເຫລືອເພື່ອນສະຫາຍ ທີ່ຮ່ວມອາຊີບຢ່າງຈິງໃຈ, ມີນ້ຳໃຈເອື້ອເຟື້ອເພື່ອແຜ່ຕໍ່ພາຍໃນ ແລະ ເພື່ອນມິດໃນໂລກ.

4.- ເປັນຜູ້ທີ່ໄດ້ປະກອບສ່ວນເຂົ້າໃນຂະບວນການວຽກງານສິລະປະວັດທະນະທຳ ແລະປະກອບວິຊາອາຊີບຂອງຕົນເປັນເວລາ 15 ປີຂຶ້ນໄປ.

### ມາດຕາ 8: ສິລະປິນດີເດັ່ນ.

ຜູ້ທີ່ຈະໄດ້ຮັບນາມມະຍົດເປັນສິລະປິນດີເດັ່ນ ຕ້ອງມີມາດຕະຖານ ແລະ ເງື່ອນໄຂດັ່ງນີ້:

1.- ແມ່ນຜູ້ທີ່ມີມາດຖານ ແລະ ເງື່ອນໄຂຄືກັນກັບຂໍ້ 1,2,3 ຂອງມາດຕາ 7 ຂອງດຳລັດສະບັບນີ້.

2.- ແມ່ນຜູ້ທີ່ໄດ້ປະກອບສ່ວນເຂົ້າໃນຂະບວນການວຽກງານສິລະປະວັດທະນະທຳ ແລະປະກອບວິຊາອາຊີບຂອງຕົນ ເປັນເວລາ 10 ປີຂຶ້ນໄປ.

## ໝວດທີ V
## ອົງການທີ່ມີສິດສະເໜີນາມມະຍົດ

**<u>ມາດຕາ 9</u>: ອົງການສະເໜີນາມມະຍົດ.**

1.- ກະຊວງຖະແຫລ່ງຂ່າວ ແລະ ວັດທະນະທຳ ເປັນຜູ້ຄົ້ນຄ້ວາພິຈາລະນາ ແລະ ສະເໜີສິລະປິນຜູ້ມີມາດຕະຖານ ແລະ ເງື່ອນໄຂໂດຍການຄັດເລືອກມາຈາກຜູ້ຕາງໜ້າຄະນະບໍລິຫານງານ ສາຂາອາຊີບສິລະປະວັດທະນະທຳຕ່າງໆ ຕໍ່ຂັ້ນເທິງເພື່ອພິຈາລະນາຕົກລົງ.

2.- ພະແນກຖະແຫລ່ງຂ່າວ ແລະ ວັດທະນະທຳທ້ອງຖິ່ນ ເປັນຜູ້ຄົ້ນຄ້ວາ, ພິຈາລະນາ ແລະ ນຳສະເໜີສິລະປິນຜູ້ທີ່ມີມາດຕະຖານ ແລະ ເງື່ອນໄຂຕາມການສະເໜີຂອງສະມາຄົມ ແລະ ໜ່ວຍງານຕ່າງໆ ພາຍໃນທ້ອງຖິ່ນຂອງຕົນ ຕໍ່ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ.

## ໝວດທີ VI
## ນະໂຍບາຍຕໍ່ສິລະປິນ ທີ່ໄດ້ຮັບນາມມະຍົດ

**<u>ມາດຕາ 10</u>: ຜົນປະໂຫຍດຂອງສິລະປິນທີ່ໄດ້ຮັບນາມມະຍົດ.**

ສິລະປິນທີ່ໄດ້ຮັບນາມມະຍົດ ຈະໄດ້ຮັບນະໂຍບາຍ ດັ່ງນີ້:

1.- ໄດ້ຮັບໃບຢັ້ງຢືນ ແລະ ຫລຽນກາ;

2.- ສິລະປິນແຫ່ງຊາດ ແລະ ສິລະປິນດີເດັ່ນ, ໄດ້ຮັບການພິຈາລະນາເລື່ອນຊັ້ນ, ຂັ້ນເງິນເດືອນ ຕາມຄວາມເໝາະສົມ, ຊຶ່ງຈະມີລະບຽບການຕ່າງຫາກ.

## ໝວດທີ VII
## ມາດຕະການຕໍ່ສິລະປິນ

**<u>ມາດຕາ 11</u>: ການຖອນນາມມະຍົດສິລະປິນ.**

ສິລະປິນທີ່ໄດ້ຮັບນາມມະຍົດ ຫາກມີການກະທຳ ທີ່ເສື່ອມເສັຽກຽດສັກສີ, ມີການປະພຶດທີ່ຜິດກົດໝາຍຢ່າງຮ້າຍແຮງ ແລະ ຖືກຕັດອິດສະລະພາບ ຈະໄດ້ຄົ້ນຄ້ວາພິຈາລະນາ ແລະ ສະເໜີຕໍ່ຂັ້ນເທິງເພື່ອຕົກລົງຖອນນາມມະຍົດດັ່ງກ່າວ.

## ໝວດທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 12: ການຈັດຕັ້ງປະຕິບັດ.**

ມອບໃຫ້ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ອອກລະບຽບການ ລະອຽດໃນການຈັດຕັ້ງປະຕິບັດດຳລັດສະບັບນີ້. ທຸກອົງການຈັດຕັ້ງຂອງພັກ, ລັດ, ມະຫາຊົນ ຂັ້ນສູນກາງ ແລະ ທ້ອງຖິ່ນຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 13: ຜົນສັກສິດ.**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

